

ທາງອອກຂອງການຖືກປະຕິເສດ



ຈາກການຖືກປະຕິເສດ
ໄປສູ່ການເປັນທີ່ຍອມຮັບ (ຕອນທີ 2)
ໂດຍ: ອາຈານ ເດເຣັກ ປິ້ຣນຊ

ໃນຈິດໝາຍສະບັບວ່າສຸດຂອງຂ້າພະເຈົ້າ,
ພວກເຮົາໄດ້ພິຈາລະນາຄວາມຫມາຍຂອງການຖືກ ປະຕິເສດຊຶ່ງກໍຄື:
ຄວາມຮູ້ສຶກບໍ່ເປັນທີ່ຕ້ອງການ, ຄວາມຮູ້ສຶກຕ້ອງການໃຫ້ຄົນອື່ນຮັກ
ແຕ່ກໍເບິ່ງຄືວ່າບໍ່ມີໃຜຮັກທ່ານ ຫຼື
ທ່ານມີຄວາມຕ້ອງການຢາກເປັນສ່ວນໜຶ່ງຂອງກຸ່ມ ແຕ່ຮູ້ສຶກຖືກກີດກັນ
ຊຶ່ງກໍຖືວ່າເປັນເລື່ອງປົກກະຕິ ເຖິງແມ່ນວ່າຢູ່ໃນວົງການຄຣິສຕຽນ
ກໍສາມາດເກີດຂຶ້ນໄດ້.

ແລ້ວເຮົາກໍພິຈາລະນາກັນຕໍ່ໄປວ່າ:
ພຣະຄຳພີໄດ້ໃຫ້ພາບຂອງການຖືກປະຕິເສດໄວ້ແບບໃດ
ໂດຍສະເພາະພາບທີ່ຫນ້າສະເທືອນໃຈ ໃນເອຊາຢາ 54:6
ຊຶ່ງເວົ້າເຖິງຍິງຄົນໜຶ່ງທີ່ຖືກຜິວປະ ແລະອຸກອັ່ງຄັ່ງໃຈຈົນສຸດຂີດ.

> "'ອົດສະຖາເອນເອີຍ ເຈົ້າເປັນຄືເມຍສາວຜູ້ຫນຶ່ງທີ່ຖືກຜິວປະ ແລະ
> ອຸກອັ່ງຄັ່ງໃຈ ໃນສຸດຂີດ.
> ແຕ່ພຣະເຈົ້າຢາເວເອີ້ນເຈົ້າໃຫ້ກັບຄືນມາຈົ່ງກັບມາຫາພຣະອົງ'
> ຜູ້ທີ່ເວົ້າກັບເຈົ້າວ່າ"(ເອຊາ2015)

ການຖືກປະຕິເສດສາມາດເກີດຂຶ້ນໄດ້ຫຼາຍຮູບແບບ ແລະ
ບາງຄົນອາດມີປະຕິກິລິຍາ
ຕອບສະໜອງຕໍ່ການຖືກປະຕິເສດແຕກຕ່າງກັນອອກໄປ.

ຕອນນີ້, ຂ້າພະເຈົ້າຢາກລົມກັບເຈົ້າເພື່ອຫາຄຳຕອບຕໍ່ບັນຫາການຖືກປະຕິເສດ,
ຢາກໃຫ້ເຈົ້າ ເບິ່ງຄຳຕອບຂອງພຣະຄຳພີທີ່ມີຕໍ່ກັບບັນຫານີ້
ແລະຢາກບອກເຈົ້າວ່າມັນໄດ້ຜົນແນ່ນອນ! ເພາະຂ້າພະເຈົ້າ
ໄດ້ເຫັນຊີວິດຜູ້ຄົນຈຳນວນຫຼວງຫຼາຍທີ່ມີການປ່ຽນແປງໄປຢ່າງສິ້ນເຊີງ,
ມັນບໍ່ແມ່ນການປ່ຽນແປງຊົ່ວຄາວ, ບໍ່ແມ່ນການປ່ຽນແປງພຶດຕິກຳ ແຕ່ເປັນການ
ປ່ຽນແປງຢ່າງສິ້ນເຊີງ.

ທຸກທາງອອກທີ່ພຣະເຈົ້າຊົງມີຕໍ່ທຸກບັນຫາໃນຊີວິດຂອງເຮົາລ້ວນແລ້ວແຕ່ມາຈາກໄມ້ ກາງແຂນທັງຫມົດ,
ໄມ້ກາງແຂນເປັນທີ່ພຣະເຈົ້າຊົງຈັດຕຽມວິທີການແກ້ໄຂໃຫ້ບັນຫາ
ທັງໝົດຂອງເຮົາ ແລະພຣະເຍຊູໄດ້ຊົງຈັດການກັບບັນຫາຂອງການຖືກປະຕິເສດ
ແລ້ວທີ່ໄມ້ກາງແຂນ.

ເມື່ອຫຼາຍປີກ່ອນ(ໃນປີ ຄ.ສ 1943)
ອົງພຣະຜູ້ເປັນເຈົ້າໄດ້ຊົງຕັດກັບຂ້າພະເຈົ້າຜ່ານຂອງ
ປະທານແຫ່ງພຣະວິນຍານວ່າ:
ຂ້າພະເຈົ້າຈະຕ້ອງຜິດຈາລະນາເຖິງເລື່ອງພຣະຄາລະກິດ
ທີ່ໂຄລະໂຄທາວ່າເປັນພຣະຄາລະກິດທີ່ລົ້ມບຽບແບບ, ລົ້ມບຽບແບບທຸກປະການ,
ລົ້ມບຽບແບບໃນທຸກດ້ານ, ຂ້າພະເຈົ້າໃຊ້ເວລາຫຼາຍ10ປີໃນການພິຈາລະນາເລື່ອງ
ພຣະຄາລະກິດທີ່ກົ່ນໂຫລາຄືສິ່ງທີ່ພຣະເຍຊູຊົງເຮັດເທິງໄມ້ກາງແຂນ ແລະ

ທຸກຄັ້ງທີ່ຄິດວ່າ ຕົວເອງຮູ້ທຸກຢ່າງແລ້ວ ກໍຄົ້ນພົບສິ່ງໃໝ່ໆສະເໝີ.

ການແລກປ່ຽນ

ຕະຫຼອດຫຼາຍປີຜ່ານມາ,
ອົງພຣະຜູ້ເປັນເຈົ້າໄດ້ຊີ້ນຳແດງຫຼັກການພື້ນຖານປະການໜຶ່ງ
ກ່ຽວກັບໄມ້ກາງແຂນແກ່ຂ້າພະເຈົ້າ,
ນັ້ນຄືການແລກປ່ຽນເປັນການແລກປ່ຽນທີ່ພຣະເຈົ້າ
ຊົງກຳນົດໄວ້ທີ່ໄມ້ກາງແຂນ
ເພື່ອໃຫ້ເລື່ອງຂອງຄວາມຍຸດຕິທຳຂອງພຣະເຈົ້າອັນເປັນນິຣັນ
ສຳເລັດສົມຄວາມປາດຖະໜາຂອງພຣະອົງທີ່ໄມ້ກາງແຂນ ດັ່ງນັ້ນ,
ພຣະຜູ້ເປັນເຈົ້າ
ຈຶ່ງຕ້ອງນຳເອົາສິ່ງຊົ່ວຮ້າຍທັງໝົດທີ່ມະນຸດສົມຄວນຈະໄດ້ຮັບຕາມຫຼັກການຂອງ
ຄວາມ ຍຸດຕິທຳມາຢູ່ກັບພຣະເຍຊູແທນ ເພື່ອວ່າໂດຍຄວາມເຊື່ອຜູ້ທີ່ກັບໃຈ ແລະ
ເຊື່ອຈະໄດ້ຮັບ ສິ່ງດີທັ້ງໝົດທີ່ພຣະເຍຊູສົມຄວນໄດ້ຮັບ
ຄວາມຍຸດຕິທຳຂອງພຣະອົງ ພຣະເຍຊູຊົງໄດ້ຮັບ
ສິ່ງຊົ່ວຮ້າຍເພື່ອເຮົາຈະໄດ້ຮັບສິ່ງທີ່ດີ ນີ້ເປັນເລື່ອງທີ່ງ່າຍງ່າຍຫຼາຍ ແລະ
ເປັນພື້ນຖານຫຼາຍ ແຕ່ເມື່ອທ່ານເລີ່ມເຂົ້າໃຈສິ່ງນີ້ແລ້ວ
ມັນກໍຈະເປີດຫົນທາງແຫ່ງພຣພອນອັນບໍ່ມີທີ່ສິ້ນສຸດ
ໃຫ້ກັບຈິດວິນຍານຂອງເຈົ້າເອງ.

ພຣະເຈົ້າ ຊົງບັນດານໃຫ້ສິ່ງຊົ່ວຮ້າຍທັງປວງມາຢູ່ບົນພຣະເຍຊູ ເພື່ອເຮົາຈະໄດ້ຮັບ
ສິ່ງທີ່ດີທັ້ງປວງ
ແລະຍິ່ງຂ້າພະເຈົ້າຄິດແລະພິຈາລະນາກັບເລື່ອງນີ້ດົນເທົ່າໃດກໍຍິ່ງເຫັນວ່າ
ການແລກປ່ຽນນັ້ນສົມບູນແບບຫຼາຍຂຶ້ນເທົ່ານັ້ນ
ແລະນີ້ເປັນພຽງບາງສ່ວນຂອງການ ແລກປ່ຽນທີ່ວ່ານີ້:

> "ພຣະເຍຊູຖືກລົງໂທດເພາະຄວາມບາບຂອງເຮົາ,
> ເພື່ອທີ່ເຮົາຈະໄດ້ຮັບການອະໄພ ພຣະເຍຊູ
> ຊົງບາດເຈັບເພາະຄວາມເຈັບປ່ວຍຂອງເຮົາ ເພື່ອເຮົາຈະໄດ້ຮັບ
> ການຮັກສາໃຫ້ຫາຍ ພຣະເຍຊູຊົງເຈັບປ່ວຍ ເພື່ອໃຫ້ເຮົາມີສຸຂະພາບດີ
> ພຣະເຍຊູ
> ຊົງຍາກຈົນເພາະເຫັນແກ່ເຮົາເພື່ອເຮົາຈະໄດ້ຮັບຄວາມຮັ່ງມີຂອງພຣະ
> ອົງ ພຣະເຍຊູ ຊົງສິ້ນພຣະຊົນ
> ເພາະຄວາມຕາຍຂອງເຮົາເພື່ອເຮົາຈະໄດ້ຮັບຊີວິດຂອງພຣະອົງ"

ໃນຄະນະທີ່ຂ້າພະເຈົ້ານຳລັງທົບທວນເລື່ອງນີ້ ພຣະເຈົ້າຊົງຕຣັດກັບຂ້າພະເຈົ້າວ່າ:
"ຍັງມີອີກດ້ານໜຶ່ງຂອງການແລກປ່ຽນນັ້ນແລ້ວການຖືກປະຕິເສດເດ?"
ເອຊາຢາ53:3 ກ່າວວ່າ :

> "ພວກເຮົາດູໝິ່ນປະໝາດ ແລະປະຖິ້ມທ່ານໄປ ທ່ານໄດ້ທົນທຸກນາໆ
> ແລະ ທົນຕໍ່ຄວາມເຈັບປວດ.
> ບໍ່ມີຜູ້ໃດແມ່ນແຕ່ຈະຫຼຽວແລເບິ່ງທ່ານເລີຍ
> ຕ່າງກໍ່ເມີນເສີຍດັ່ງເພິ່ນບໍ່ມີຫຍັງຈັກດີ." (ພຄສ 2015)

ເປັນເວລາ 3 ປີ 6
ເດືອນທີ່ພຣະເຍຊູຊົງອຸທິດພຣະຊົນຂອງພຣະອົງທັງໝົດໃຫ້ກັບ
ການກະທຳຄວາມດີຄື: ການອະໄພບາບ, ການຮັກສາໂລກໄພໄຂ້ເຈັບ ແລະ
ການປົດປ່ອຍ ຜູ້ທີ່ຖືກມານກົດຂີ່. ພຣະອົງບໍ່ໄດ້ເຮັດສິ່ງໃດເລີຍນອກຈາກຄວາມດີ,
ເມື່ອສິ້ນສຸດ ຊ່ວງເວລານັ້ນແລ້ວ
ຜູ້ປົກຄອງຊາວໂຣມັນໄດ້ໃຫ້ຊົນຊາດຂອງພຣະອົງເຊິ່ງເປັນຊົນຊາດຢິວ
ເລືອກວ່າພວກເຂົາຕ້ອງການຜູ້ໃດລະຫວ່າງພຣະເຍຊູຊາວນາຊາເລັກ
ຫຼືອາດສະຍາກອນ ຊື່ບຣາຣາບບັສ ເຊິ່ງມີຄວາມຜິດດ້ານກົດໝາຍທາງການເມືອງ,
ການປົ້ນ ແລະ ການຄາດຕະກຳດ້ວຍການຕັດສິນໃຈທີ່ໜ້າເຫຼືອເຊື່ອ
ແລະໜ້າສະຫຼົດໃຈທີ່ສຸດຄັ້ງໜຶ່ງ
ໃນປະຫວັດສາດຂອງມະນຸດຄົນທັ້ງຊາດຖືກຍຸໃຍງໂດຍຜູ້ນຳສາສະໜາຂອງພວກເ
ຂົາ ໃຫ້ປະຕິເສດພຣະເຍຊູ ແລະໄດ້ເລືອກເອົາວ່ານ ບຣາຣາບບັສ
ເຊິ່ງເປັນຜູ້ທີ່ກໍ່ກະບົດ ທາງການເມືອງແທນ.

ພວກເຂົາກ່າວວ່າ "ເອົາພຣະເຍຊູໄປໃຫ້ພົ້ນ ຄືພຣະອົງທີ່ໄມ້ກາງແຂນ!
ພວກເຮົາບໍ່ຕ້ອງການ ພຣະອົງ! ພວກເຮົາເລືອກບຣາຣາບບາສຜູ້ທີ່ເປັນຂີ້ລັກ
ແລະໂຈນ" ພຣະເຍຊູຊົງ ຕອບສະໜອງຢ່າງໃດ?
ພຣະອົງຊົງອະທິຖານຕໍ່ພຣະບິດາເພື່ອຊົງອະໄພຜູ້ທີ່ຄ້ຽພຣະອົງ ເທິງໄມ້ກາງແຂນ
ພຣະອົງບໍ່ໄດ້ກ້ຽວົນເຖິງສິ່ງທີ່ກຳລັງເກີດຂຶ້ນກັບພຣະອົງ ແຕ່ພຣະອົງ
ຊົງກ້ຽວົນວ່າຈະເກີດຫຍັງຂຶ້ນກັບພວກເຂົາ
ຕົວຢ່າງອັນໜ້າອັດສະຈັນຂອງພຣະເຍຊູຄື ເຖິງວ່າພຣະອົງຊົງທົນທຸກທໍລະມານ
ແລະຖືກປະຕິເສດ ແຕ່ພຣະອົງບໍ່ໄດ້ຊົງຫ່ວງໃຍ ຕົວຂອງພຣະອົງເອງ
ແຕ່ກັບຫ່ວງໃຍຜູ້ທີ່ປະຕິເສດພຣະອົງເຊິ່ງເປັນແບບຢ່າງທີ່ໜ້າຊື່ນຊົມ !

ເມື່ອຂ້າພະເຈົ້າວິເຄາະເລື່ອງ ການແລກປ່ຽນຂອງພຣະເຍຊູເທິງໄມ້ກາງແຂນໃນແງ່
ຂອງບັນຫາການຖືກປະຕິເສດ ຂ້າພະເຈົ້າ ໄດ້ນຶກເຖິງບາງສິ່ງທີ່ໜ້າຕົກໃຈຄື:
ເຖິງວ່າ ອ່າພຣະອົງຊົງຖືກມະນຸດປະຕິເສດກໍຕາມ
ແຕ່ຄວາມທຸກທໍລະມານຄັ້ງສຸດທ້າຍຂອງພຣະເຍຊູ ເທິງໄມ້ກາງແຂນຄື
ການຖືກປະຕິເສດໂດຍພຣະບິດາຂອງພະອົງ ເມື່ອເຈົ້າອ່ານເລື່ອງລາວນີ້
ມາຈົນເຖິງຕອນຈົບຂອງປະສົບການອັນໂຫດຮ້າຍຂອງພຣະອົງນັ້ນ,
ພຣະອົງຊົງຕຣັດວ່າ :

> "ພຣະເຈົ້າຂອງຂານ້ອຍ ພຣະເຈົ້າຂອງຂານ້ອຍເອີຍ
> ດ້ວຍເຫດໃດພຣະອົງຈຶ່ງປະຖິ້ມຂານ້ອຍເສຍ?." (ມັດທາຍ 27:46-
> ພຄສ2015)"

ແລະບໍ່ມີຄຳຕອບຈາກສະຫວັນ ນັບເປັນຄັ້ງທຳອິດໃນປະຫວັດສາດຂອງຈັກກະວານ
ທີ່ພຣະບິດາຊົງປິດໜ້າຕໍ່ສຽງຮ້ອງຂອງພຣະບຸດ ແລ້ວພຣະເຍຊູກໍ່ໄດ້ຊົງນຶກຂຶ້ນໄດ້ວ່າ
ພຣະບິດາໄດ້ຊົງປະຕິເສດພຣະອົງ ເຫດໃດພຣະບິດາຊົງປະຕິເສດພຣະເຍຊູ?
ພຣະຄຳພີກ່າວວ່າພຣະເຈົ້ານັ້ນຊົງ :

> "...ຕາຂອງພຣະອົງແສນບໍຣິສຸດຍິ່ງ
> ເກີນກວ່າຈະເບິ່ງຄວາມຊົ່ວຊ້າໄດ້." (ຮາບາກຸກ 1:13-ພຄສ2015)

ເມື່ອພຣະເຍຊູຖືກເຮັດໃຫ້ບາບ ດ້ວຍຄວາມບາບຂອງເຮົາພຣະຜູ້ເປັນເຈົ້າ
ໄດ້ຫັນຕາຂອງພຣະອົງ
ແລະປິດໜູຂອງພຣະອົງຕໍ່ສຽງຮ້ອງຂອງພຣະບຸດຂອງພຣະອົງ.

ຫຼັງຈາກນັ້ນ ມີສຽງຮ້ອງອີກພຽງຄັ້ງດຽວທີ່ດັງອອກມາຈາກພຣະໂອບຂອງພຣະເຍຊູ
ແລ້ວພຣະອົງກໍ່ສິ້ນພຣະຊົນ
ຂ້າພະເຈົ້າເຊື່ອວ່ານັ້ນຖືກຕ້ອງແທ້ວ່າພຣະອົງຊົງສິ້ນພຣະຊົນ
ກໍ່ເພາະພຣະໄທທີ່ແຕກສະລາຍ
ສິ່ງທີ່ເຮັດໃຫ້ພຣະໄທຂອງພຣະອົງແຕກສະຫຼາຍນັ້ນບໍ່ແມ່ນ
ການຖືກປະຕິເສດໂດຍຄົນຂອງພຣະອົງເອງ
ແຕ່ເປັນການຖືກປະຕິເສດໂດຍພຣະບິດາ.

ສຳລັບທຸກຄົນທີ່ອ່ານບົດຄວາມນີ້
ເຊິ່ງເປັນຜູ້ທີ່ຕ້ອງທົນທຸກທໍລະມານຈາກການຖືກປະຕິເສດ

ຂ້າພະເຈົ້າຢາກບອກທ່ານຕອນນີ້ວ່າພຣະເຢຊູຊົງປະສົບກັບຄວາມເຈັບປວດທີ່ເລິກທີ່ສຸດ ຂອງການຖືກປະຕິເສດ
ລວມເຖິງການຖືກພຣະບິດາຂອງພຣະອົງປະຕິເສດ ແລະພຣະອົງ
ຊົງແບກຮັບມັນໄວ້ເພື່ອເຮົາ ເພື່ອໃຫ້ເຮົາໄດ້ຮັບການຊ່ວຍກູ້ ຫາກຈະມີຂ່າວດີ
ສຳລັບຄົນໃນຍຸກນີ້ກໍຄືຈະເປັນເລື່ອງນີ້ນີ້ເອງ.

ການເປັນທີ່ຍອມຮັບ

ສິ່ງທີ່ກົງກັນຂ້າມກັບການຖືກປະຕິເສດແມ່ນຫຍັງ?
ກໍຄືການໄດ້ຮັບການຍອມຮັບນັ້ນເອງ ຂ້າພະເຈົ້າ, ມັກພຣະຄຳເອເຟໂຊ 1:6
(ສະບັບຄິງເຈມສໃໝ່-ພາສາອັງກິດ) ເພາະພຣະຄຳ ສະບັບນີ້ກ່າວວ່າ:
ພຣະເຈົ້າໄດ້ຊົງ "ເຮັດໃຫ້ເຮົາເປັນທີ່ຍອມຮັບ ໃນຜູ້ເປັນທີ່ຮັກຂອງພຣະອົງ"
ພຣະເຢຊູຜູ້ຊົງເປັນພຣະບຸດທີ່ແທ້ຈິງ
ແລະພຣະບຸດອົງດຽວຂອງພຣະເຈົ້າໄດ້ຊົງຖືກປະຕິເສດ ເພື່ອເຮົາຜູ້ທີ່ບໍ່ຄູ່ຄວນ
ເພາະການເປັນກະບົດຂອງເຮົາ ຈະໄດ້ຮັບການຍອມຮັບຈາກພຣະບິດາ ດັ່ງນັ້ນ
ວິທີແກ້ໄຂເລີກທີ່ສຸດສຳລັບບັນຫາຂອງເຮົາຄື
ການເຊື່ອວ່າພຣະເຢຊູໄດ້ຊົງແບກຮັບ ການຖືກປະຕິເສດຂອງເຮົາ
ເພື່ອເຮົາຈະໄດ້ຮັບການຍອມຮັບຂອງພຣະອົງຈາກພຣະບິດາ.

ບາງຄັ້ງອາດມີບັນຫາ ທີ່ເກີດຂຶ້ນກັບພໍ່ແມ່ທາງໂລກທີ່ບໍ່ສາມາດແກ້ໄຂໄດ້
ແຕ່ເພີ່ນບ້ອງເອີຍ ເຖິງແມ່ນວ່າຈະບໍ່ມີໃຜຕ້ອງການເຈົ້າ ບໍ່ມີໃຜຮັກເຈົ້າ
ພໍ່ແມ່ຂອງເຈົ້າອາດຈະຍັງບໍ່ໄດ້ ແຕ່ງງານກັນເທື່ອກໍ່ບໍ່ເປັນຫຍັງ
ແຕ່ເມື່ອເຈົ້າມາຫາພຣະເຈົ້າຜ່ານທາງພຣະເຢຊູຄຣິດ
ເຈົ້າຈະກາຍເປັນສະມາຊິກຂອງຄອບຄົວທີ່ດີທີ່ສຸດໃນຈັກກະວານ ແລະພຣະເຈົ້າ
ບໍ່ມີລູກທີ່ເປັນລຳດັບທີ່ສອງ

ຄອບຄົວຂອງພຣະເຈົ້າ
ເປັນຄອບຄົວທີ່ດີທີ່ສຸດບໍ່ມີຄອບຄົວໃດທີ່ຈະທຽບເທົ່າກັບຄອບຄົວ ຂອງພຣະເຈົ້າ
ເຖິງວ່າຄອບຄົວຂອງເຈົ້າຈະບໍ່ໄດ້ສົນໃຈເຈົ້າ ຫຼື ພໍ່ຂອງເຈົ້າປະຕິເສດເຈົ້າ
ຫຼືແມ່ຂອງເຈົ້າ ບໍ່ເຄີຍມີເວລາໃຫ້ເຈົ້າ
ຫຼືສາມີຂອງເຈົ້າບໍ່ເຄີຍສະແດງຄວາມຮັກຕໍ່ເຈົ້າກໍຕາມ
ແຕ່ພຣະເຈົ້າຍັງຄົງຕ້ອງການເຈົ້າ,
ເຈົ້າໄດ້ຮັບການຍອມຮັບແລ້ວເຈົ້າເປັນຈຸດມຸ່ງໝາຍ ຂອງການເອົາໃຈໃສ
ແລະຄວາມຮັກທີ່ພິເສດຂອງພຣະອົງ ເຈົ້າເປັນຈຸດສູນກາງຂອງ
ທຸກສິ່ງທີ່ພຣະອົງຊົງກະທຳໃນຈັກກະວານນີ້.

ເມື່ອພຣະເຈົ້າຊົງຕັດວ່າເຮົາເປັນທີ່ຍອມຮັບນັ້ນ ພຣະອົງບໍ່ໄດ້ໝາຍຄວາມວ່າ
ພຣະອົງ ພຽງແຕ່ຍອມອົດທົນກັບເຮົາເທົ່ານັ້ນ -
ຢ່າສ້າງຄວາມລຳຄານໃຫ້ກັບພຣະອົງ ຢ່າເຮັດໃຫ້ ພຣະອົງເສຍພຣະໄທ
ຫຼືຍາວົບກອນພຣະອົງ, ແທ້ຈິງແລ້ວເຮົາບໍ່ເຄີຍໃຊ້ເວລາຂອງ
ພຣະອົງຫຼາຍເກີນໄປເລີຍ
ແຕ່ສິ່ງດຽວທີ່ເຮັດໃຫ້ພຣະອົງເສຍພຣະໄທກໍຄືຕອນທີ່ເຮົາ
ຢູ່ຫ່າງຈາກພຣະອົງຫຼາຍເກີນໄປຕ່າງຫາກ.

ພຣະເຈົ້າບໍ່ໄດ້ຢູ້ເຮົາເຂົ້າໄປໃນແຈ່ໜຶ່ງແລ້ວກ່າວວ່າ "ຖ້າກ່ອນ
ເຮົາກຳລັງຫຍຸ້ງຫຼາຍ ເຮົາບໍ່ມີເວລາສຳລັບເຈົ້າ"
ໃນທາງກົງກັນຂ້າມພຣະອົງຊົງເວົ້າວ່າ "ເຮົາສົນໃຈໃນຕົວເຈົ້າ, ເຮົາຕ້ອງການເຈົ້າ,
ເຮົາຍິນດີຮັບເຈົ້າທີ່ນີ້, ເຂົ້າມາເທີດເຮົາເຜົ້າຖ້າທ່ານມາດົນແລ້ວ."

ຊົ່ນດຽວກັບພໍ່ໃນເລື່ອງລາວຂອງບຸດນ້ອຍຫຼົງຫາຍ (ເບິ່ງລູກາ15:11-32) ພໍ່ນັ້ນ
ອອກໄປເຝົ້າເບິ່ງຫາລູກຊາຍທີ່ຈະກັບມາບ້ານ
ບໍ່ຈຳເປັນຕ້ອງມີໃຜມາບອກພໍ່ຄົນນັ້ນວ່າ ລູກຂອງເຈົ້າກັບມາບ້ານແລ້ວ
ເພາະຄົນທ່າອິດທີ່ຮູ້ກໍຄືພໍ່ນັ້ນເອງ ເຂົາຮູ້ເລື່ອງນີ້
ກ່ອນທີ່ທຸກຄົນໃນຄອບຄົວຈະຮູ້ເສຍອີກ.

ທັດສະນະຄະຕິຂອງພຣະເຈົ້າທີ່ຊົງມີຕໍ່ພວກເຮົາໃນພຣະຄຣິດກໍເປັນເຊັ່ນນັ້ນ
ພວກເຮົາ ບໍ່ໄດ້ຖືກປະຕິເສດ ພວກເຮົາບໍ່ແມ່ນພົນລະເມືອງຊັ້ນສອງ
ພວກເຮົາບໍ່ແມ່ນພຽງຄົນຮັບໃຊ້
ເມື່ອບຸດນ້ອຍຫຼົງຫາຍກັບມາເຂົາເຕັມໃຈທີ່ຈະເປັນພຽງຄົນຮັບໃຊ້
ແຕ່ພໍ່ກັບບໍ່ຍອມ ກົງກັນຂ້າມພໍ່ກັບເວົ້າວ່າ "ຈົ່ງເອົາເສື້ອຄຸມທີ່ດີທີ່ສຸດອອກມາ
ເອົາເກີບໃສ່ຕີນຂອງເຂົາ ສວມແຫວນໃສ່ນິ້ວຂອງເຂົາ ຈົ່ງຂ້າງົວໂຕໃຫຍ່ເທີດ!
ລູກຊາຍຂອງຂານ້ອຍຄົນນີ້ຫາຍໄປແລ້ວ ແຕ່ໄດ້ພົບກັນອີກ
ຕາຍແລ້ວແຕ່ເປັນຄືນມາອີກ" ທ້າຄອບຄົວຕ່າງກໍ່ຫຍຸ້ງກັບການ
ຕຽມຕ້ອນຮັບເຂົ້າກັບເຮືອນ.

ໃນທຳນອງດຽວກັນພຣະເຢຊູຊົງຕັດວ່າ:

> "ໃນທຳນອງດຽວກັນນີ້ແຫຼະ ເຮົາບອກພວກເຈົ້າທັ້ງຫຼາຍວ່າ,
> ໃນສະຫວັນ
> ຈະມີຄວາມຊົມຊື່ນຍິນດີຫຼາຍທີ່ຄົນບາບຜູ້ໜຶ່ງຖິ້ມໃຈເກົ່າເອົາໃຈໃໝ່
> ຫຼາຍກ່ວາຄົນສິບທ່າເກົ້າສິບເກົ້າຄົນ
> ທີ່ບໍ່ຕ້ອງການຖິ້ມໃຈເກົ່າເອົາໃຈໃໝ່." (ລູກາ15:7 ພຄສ2015)

ນັ້ນຄືວິທີທີ່ພຣະເຈົ້າຊົງຕ້ອນຮັບເຮົາໃນພຣະຄຣິດ.

ເຮົາຕ້ອງເຂົ້າໃຈຂໍ້ເທັດຈິງພື້ນຖານສອງປະການນີ້ຄື:

1. ພຣະຄຣິດໄດ້ຊົງແບກຮັບການຖືກປະຕິເສດຂອງເຮົາໄວ້ເທິງໄມ້ກາງແຂ
   ນ ຄືຄວາມທຸກທໍລະມານແລະຄວາມເຈັບປວດໃຈທັງໝົດ.
2. ມີການແລກປ່ຽນເກີດຂຶ້ນຄື ເມື່ອເຮົາໄດ້ຮັບການຍອມຮັບເນື່ອງຈາກ
   ການຖືກປະຕິເສດຂອງພຣະອົງເຮົາກໍ "ໄດ້ຮັບການຍອມຮັບ
   ໃນພຣະອົງຜູ້ຊົງເປັນທີ່ຮັກ."

ບາງຄັ້ງເຈົ້າບໍ່ຈຳເປັນຕ້ອງເຮັດຫຍັງຫຼາຍໄປກວ່າການຍຶດໝັ້ນໃນຂໍ້ເທັດຈິງທັ້ງສອ
ງນີ້ ເພື່ອເອົາຊະນະການຖືກປະຕິເສດ
ໃນການປະຊຸມຄັ້ງໜຶ່ງທີ່ຈັດຂຶ້ນເມື່ອສອງສາມປີກ່ອນ ຂະນະທີ່
ຂ້າພະເຈົ້າກຳລັງຜ່ານອາຄະໄປເທດສະໜາແລ້ວບັງເອີນໄປພົບກັບຍິງຄົນໜຶ່ງ
ທີ່ກຳລັງມຸ່ງໜ້າໄປອີກທາງໜຶ່ງ ລາວຫາຍໃຈຫອບ ແລະເວົ້າວ່າ "ໂອ້ ອາຈານ
ປຣິ້ນຊ!
ຂານ້ອຍກຳລັງອະທິຖານວ່າຖ້າພຣະເຈົ້າຕ້ອງການໃຫ້ຂານ້ອຍພົບກັບອາຈານ
ເຮົາກໍຈະໄດ້ພົບກັນ."

"ເອົາລະ," "ຂ້າພະເຈົ້າເວົ້າວ່າ: ເຮົາໄດ້ເຈີກັນແລ້ວມີບັນຫາຫຍັງຫຼືບໍ່?
ຂ້ອຍໃຫ້ເວລາເຈົ້າໄດ້ປະມານສອງນາທີຂ້ອຍກຳລັງຈະຂຶ້ນເທດສະໜາແລ້ວ. "

ລາວເລີ່ມຕົ້ນເວົ້າ ແລະຫຼັງຈາກນັ້ນປະມານເຄິ່ງນາທີ ຂ້າພະເຈົ້າກໍເວົ້າວ່າ
"ດຽວກ່ອນ ຂ້ອຍຮູ້ບັນຫາຂອງເຈົ້າແລ້ວ
ຂ້ອຍບໍ່ຕ້ອງການຂໍ້ເທັດຈິງອີກບັນຫາຂອງເຈົ້າຄື ການຖືກປະຕິເສດ"
ຂ້າພະເຈົ້າບອກລາວວ່າ "ເວົ້າຄຳຫຼ້ານີ້ອອກມາແຮງໆຕາມຂ້ອຍ"
ຂ້າພະເຈົ້າຈົ່ງນຳລາວກ່າວຄຳປະກາດຊຶ່ງລາວໄດ້ເວົ້າຕາມ ຈື່ຄຳເວົ້າທີ່ແນ່ຊັດບໍ່ໄດ້
ແຕ່ເປັນຄຳເວົ້າປະມານນີ້ຄື "ຂ້າແດ່ພຣະເຈົ້າ ຂ້າພຣະອົງຂອບພຣະຄຸນທີ່ພຣະອົງ
ຊົງເປັນພຣະບິດາຂອງຂ້າພຣະອົງ ແລະຂ້າພຣະອົງເປັນລູກຂອງພຣະອົງ
ຂ້າພຣະອົງ ເປັນສະມາຊິກຄອບຄົວຂອງພຣະເຈົ້າ ສະຫວັນຄືບ້ານຂອງຂ້າພຣະອົງ
ຂ້າພຣະອົງ ເປັນສ່ວນໜຶ່ງຂອງຄອບຄົວ ຂ້າພຣະອົງບໍ່ໄດ້ຖືກປະຕິເສດ
ຂ້າພຣະອົງໄດ້ຮັບການຍອມຮັບ ພຣະເຈົ້າຊົງຮັກຂ້າພຣະອົງ

ພຣະເຈົ້າຊົງຕ້ອງການຂ້າພຣະອົງ ພຣະອົງຊົງຫ່ວງໃຍຂ້າພຣະອົງ"
ແລ້ວຂ້າພະເຈົ້າກໍເວົ້າວ່າ "ອາແມນ" ແລະ "ລາກ່ອນຂ້ອຍຕ້ອງໄປແລ້ວ"
ແລ້ວກໍຈາກຍິງຄົນນັ້ນໄປ.

ປະມານໜຶ່ງເດືອນຕໍ່ມາ ຂ້າພະເຈົ້າໄດ້ຮັບຈົດໝາຍຈາກບຸກຄົນຄົນດຽວກັນນັ້ນ
ຊຶ່ງລາວບອກວ່າ
''ຂ້ານ້ອຍຢາກຈະບອກອາຈານວ່າສອງນາທີທີ່ອາຈານໃຊ້ເວລາກັບຂ້ານ້ອຍ ແລະ
ຄຳເວົ້າເລົ່ານັ້ນທີ່ຂານ້ອຍເວົ້າໄປ ໄດ້ປ່ຽນຊີວິດທັ້ງຊີວິດຂອງຂານ້ອຍຢ່າງສິ້ນເຊີງ
ຂານ້ອຍປ່ຽນແປງໄປເປັນຄົນລະຄົນນັບຕັ້ງແຕ່ນັ້ນເປັນຕົ້ນມາ
''ເປັນຫຍັງຍິງຄົນນັ້ນ ເຖິງໄດ້ຮັບການປ່ຽນແປງ? ເພາະລາວໄດ້ຮັບຮູ້ວ່າ
ການເປັນທີ່ຍອມຮັບໃນພຣະຄຣິດນັ້ນ ໝາຍຄວາມວ່າແນວໃດ.

ສີ່ຂັ້ນຕອນ

ສຳລັບຫຼາຍໆຄົນ ການປະກາດງ່າຍໆວ່າຕົ້ນໄດ້ຮັບການຍອມຮັບໃນພຣະຄຣິດ
ກໍສາມາດແກ້ໄຂບັນຫາໄດ້ແລ້ວ ແຕ່ສຳລັບຄົນອື່ນນັ້ນ ອາດຕ້ອງເຮັດຫຼາຍກວ່ານີ້
ດັ່ງນັ້ນ, ຂ້າພະເຈົ້າ
ຈະອະທິບາຍລາຍລະອຽດເພີ່ມເຕີມອີກໜ່ອຍໜຶ່ງກ່ຽວກັບຂັ້ນຕອນງ່າຍໆ
ທີ່ເຈົ້າຕ້ອງກະທຳ ຫາກເຈົ້າປະສົບກັບບັນຫາການຖືກປະຕິເສດເຊື່ອວ່າ
ພຣະວິນຍານບໍຣິສຸດ ຈະຊົງສຳແດງໃຫ້ເຫັນວ່າເຈົ້າເປັນເຊັ່ນນັ້ນຫຼືບໍ່.

1. ຍົກໂທດໃຫ້ຜູ້ທີ່ປະຕິເສດເຈົ້າ

ນີ້ເປັນສິ່ງຈຳເປັນເຈົ້າອາດຈະບອກວ່າ "ພໍ່ຂອງຂ້ອຍຕາຍແລ້ວ"
ເພາະມີຄົນເວົ້າກັບຂ້າພະເຈົ້າແບບນີ້ຫຼາຍຕໍ່ຫຼາຍຄັ້ງ ແລະທຸກຄັ້ງ
ຂ້າພະເຈົ້າກໍຕອບໄປວ່າ "ນັ້ນບໍ່ສຳຄັນເພາະທີ່ເຈົ້າໃຫ້ອະໄພ
ເຈົ້າບໍ່ໄດ້ເຮັດໄປເພາະເຫັນແກ່ພໍ່ຂອງເຈົ້າ
ແຕ່ເຮັດໄປກໍເພື່ອປະໂຫຍດຂອງເຈົ້າເອງ"

ຂ້າພະເຈົ້າ
ຮູ້ຈັກຊາຍໜຸ່ມຄຣິດສະຕຽນທີ່ດີຄົນໜຶ່ງທີ່ໄດ້ຍືນກ່ຽວກັບເລື່ອງນີ້ເຂົາຄິດ
ວ່າເປັນເວລາຫຼາຍປີທີ່ເຂົາຕ້ອງແບກຮັບຄວາມຂົມຂື່ນ,
ຄວາມຄຸນເຄືອງ,ຄວາມໂກດແຄ້ນ ແລະການກະບົດ ຕໍ່ພໍ່ຂອງເຂົາທີ່ຕາຍໄປແລ້ວ,
ເຂົາໄດ້ພາພັນລະຍາເດີນທາງເປັນໄລຍະທາງ ຫຼາຍຮ້ອຍໄມ
ໄປຫາສຸສານທີ່ຝັງສົບພໍ່ຂອງເຂົາ. ເຂົາປ່ອຍໃຫ້ພັນລະຍາຂອງເຂົາຢູ່ໃນລົດ
ສ່ວນຕົວເຂົານັ້ນຍ່າງໄປທີ່ຂຸມສົບພໍ່ຕາມລຳພັງເຂົາຄຸກເຂົ່າລົງທີ່ນັ້ນ ແລະ
ໃຊ້ເວລາຫຼາຍຊົ່ວໂມງ ຕໍ່ມາເພື່ອຂັບໄລ່ທັດສະນະຄະຕິທີ່ເປັນຜິດທັ້ງໝົດຂອງເຂົາ
ເຂົາບໍ່ໄດ້ລຸກຂຶ້ນຈົນກວ່າເຂົາຈະຮູ້ແນ່ວ່າເຂົາໄດ້ຍົກໂທດໃຫ້ພໍ່ແລ້ວ
ເມື່ອເຂົາຍ່າງອອກຈາກ ສຸສານນັ້ນເຂົາກໍກາຍເປັນຄົນລະຄົນ,
ປັດຈຸບັນພັນລະຍາຂອງລາວເປັນພະຍານວ່າເຂົາໄດ້ສາມີ ຄົນໃໝ່
ພໍ່ຂອງລາວໄດ້ສູນເສຍຊີວິດໄປແລ້ວແຕ່ຄວາມໂກດແຄ້ນຂອງລາວເອງຍັງຄົງຢູ່.

ການໃຫ້ອະໄພນັ້ນ ບໍ່ແມ່ນການກະທຳເພື່ອປະໂຫຍດຂອງຜູ້ທີ່ຕາຍໄປແລ້ວ
ຫຼືຜູ້ທີ່ຢູ່ຫ່າງໄກ
ແຕ່ເພື່ອໃຫ້ຄວາມສຳພັນຂອງຕົວເຮົາທີ່ເຮົາກຳລັງເວົ້າເຖິງນັ້ນຈົບລົງ
ເຈົ້າຕ້ອງໃຫ້ອະໄພ ເພື່ອຕົວຂອງເຈົ້າເອງ ຂ້າພະເຈົ້າ
ຂໍໃຫ້ທ່ານນຶກເຖິງບາງສິ່ງທີ່ຂ້າພະເຈົ້າໄດ້ກ່າວໄປຫຼາຍຄັ້ງ ແລ້ວກໍຄື
ການໃຫ້ອະໄພບໍ່ແມ່ນເລື່ອງຂອງອາລົມຄວາມຮູ້ສຶກ ແຕ່ມັນຄືການຕັດສິນໃຈ
ຢ່າເວົ້າວ່າ "ຂ້ອຍເຮັດບໍ່ໄດ້ດອກ" ຖ້າເວົ້າກັບຕາມຄວາມຈິງມັນຄື "ຂ້ອຍຈະບໍ່
(ໃຫ້ອະໄພ)" ຫາກທ່ານສາມາດເວົ້າໄດ້ວ່າ "ຂ້ອຍຈະບໍ່(ໃຫ້ອະໄພ)"
ທ່ານກໍ່ສາມາດເວົ້າໄດ້ວ່າ "ຂ້ອຍຈະ(ໃຫ້ອະໄພ)'"ເຊັ່ນກັນ.

ປະການທຳອິດເຈົ້າຕ້ອງໃຫ້ອະໄພທຸກຄົນທີ່ທ່ານຮູ້ສຶກວ່າເຂົາປະຕິເສດທ່ານ.

2. ວາງຄວາມຂົ່ນຂົມ, ຄວາມຄຽດແຄ້ນ, ຄວາມກຽດຊັງ ແລະ ການກະບົດລົງ.

ນີ້ຄືການຕອບສະໜອງສີ່ປະການທີ່ມັກມາພ້ອມກັບການຖືກປະຕິເສດທີ່ຜ່ານມາ.

3.ຍອມຮັບຄວາມຈິງວ່າເຈົ້າເປັນທີ່ຍອມຮັບແລ້ວ ໃນພຣະຄຣິດ ແລະພຣະເຈົ້າຊົງຍອມຮັບເຈົ້າ.

ຂ້າພະເຈົ້າ
ຂໍຍ້ຳອີກຄັ້ງວ່ານີ້ບໍ່ໄດ້ໝາຍຄວາມວ່າພຣະອົງພຽງແຕ່ຍອມອົດທົນຕໍ່ເຈົ້າເທົ່ານັ້ນ
ແຕ່ພຣະອົງຊົງຮັກເຈົ້າ ພຣະອົງຊົງຊົມໃຈ ແລະຫ່ວງໃຍເຈົ້າ
ຂ້າພະເຈົ້າບໍ່ແນ່ໃຈວ່າໄດ້ບອກ ສິ່ງນີ້ກັບຄົນໜຸ່ມສາວໄປຈັກຄົນແລ້ວ
ແລະໄດ້ເຫັນໃບໜ້າຂອງພວກເຂົາເປັ່ງປະກາຍຂຶ້ນຄື ຂ້າພະເຈົ້າເຄີຍເປັນ.

4.ຍັງມີອີກສິ່ງໜຶ່ງທີ່ເຈົ້າຕ້ອງໄດ້ເຮັດ ແລະຢ່າລືມສິ່ງນີ້ຄື ທ່ານຕ້ອງຍອມຮັບຕົວເອງ.

ບາງຄັ້ງນີ້ອາດເປັນສ່ວນທີ່ຍາກທີ່ສຸດ ຂ້າພະເຈົ້າບອກກັບລູກໆຂອງຂ້າພະເຈົ້າວ່າ
ຢ່າດູຖູກຕົນເອງ
ແລະຢ່າວິພາກວິຈານຕົວເອງເພາະເຈົ້າເປັນເຄື່ອງມືຂອງພຣະເຈົ້າ.

> “ສິ່ງຖືກປັ້ນຈະກ່າວກັບຜູ້ປັ້ນວ່າ
> ‘ເປັນຫຍັງເຈົ້າຈຶ່ງປັ້ນຂ້ອຍມາແບບນີ້?’” (ໂຣມ 9:20-ພຄສ2015)

ບໍ່ແມ່ນໜ້າທີ່ຂອງເຈົ້າທີ່ຈະວິພາກວິຈານ
ພຣະເຈົ້າຊົງຮູ້ວ່າພຣະອົງຊົງກຳລັງເຮັດຫຍັງຢູ່,
ຂໍພຽງວາງໃຈພຣະອົງໃນຖານະຄຣິສຕຽ, ການວິພາກວິຈານຕົວເອງນັ້ນບໍ່ແມ່ນ
ຄວາມຖ່ອມໃຈ ແຕ່ເປັນການກະບົດ
ຢ່າໄດ້ດູຖູກຕົວເອງເຈົ້າຄືຝີພຣະຫັດຂອງພຣະເຈົ້າ
ເປັນຜົນງານຊິ້ນເອກຂອງພຣະອົງ ເຊິ່ງເປັນສິ່ງທີ່ພຣະອົງຊົງອຸທິດເວລາຫຼາຍທີ່ສຸດ
ແລະ ໃສ່ພຣະໄທຫຼາຍກ່ວາສິ່ງອື່ນທີ່ພຣະອົງຊົງສ້າງມາໃນຈັກກະວານນີ້
ເຈົ້າຄືຜູ້ທີ່ພຣະເຈົ້າຊົງ ໃຫ້ຄວາມສຳຄັນ ແລະຄວາມສົນໃຈໃນອັນດັບທຳອິດ
ຫາກນັ້ນບໍ່ເຮັດໃຫ້ເຈົ້າຮູ້ສຶກດີ,
ກໍບໍ່ຮູ້ແລ້ວວ່າແມ່ນຫຍັງຈະເຮັດໃຫ້ເຈົ້າຮູ້ສຶກດີຂຶ້ນໄດ້.

ຮັບການປົດປ່ອຍ

ເມື່ອເຮົາໄດ້ເບິ່ງແງ່ມຸມຕ່າງໆ ຂອງການຖືກປະຕິເສດແລ້ວ ຂ້າພະເຈົ້າຕ້ອງການ
ເຊີນຊວນເຈົ້າໃຫ້ປົດປ່ອຍຕົວເອງຈາກການຖືກປະຕິເສດນັ້ນ ບາງທີນີ້ອາດເປັນ
ພື້ນທີ່ໃນຊີວິດຂອງເຈົ້າ ທີ່ບໍ່ເຄີຍປະເຊີນມາກ່ອນ ແລະຕອນນີ້
ພຣະວິນຍານບໍຣິສຸດ ໄດ້ຊົງເປີດເຜີຍບາງສິ່ງທີ່ຈິດໃຈຂອງເຈົ້າ
ປະຕິເສດຈະຮັບຮູ້ມາໂດຍຕະຫຼອດ ຫາກ ອົງພຣະຜູ້ເປັນເຈົ້າຊົງສຳແດງໃຫ້ເຫັນວ່າ
ເຈົ້າຕ້ອງໄດ້ຮັບການປົດປ່ອຍຈາກການ ຖືກປະຕິເສດ
ແລະເຈົ້າຢາກຈະວົງມືປະຕິບັດຕົວຈິງ, ຂໍແນະນຳໃຫ້ເຈົ້າກ່າວຄຳປະກາດ
ຕໍ່ໄປນີ້ອອກມາເປັນສຽງດັງໆ ແລະໃນຄະນະທີ່ກຳລັງປະກາດຄຳເຫຼົ່ານີ້
ຫາກເຈົ້ມສະອື້ນ ຫຼືຮ້ອງໄຫ້ຢ່າປິດກັ້ນສິ່ງນັ້ນເອົາໄວ້!
ເພາະເຖິງເຈົ້າຈະມີເງິນເປັນພັນດອນລາກໍ່ບໍ່ສາມາດ
ຫາຊື້ປະສົບການແບບນີ້ໄດ້ອີກແລ້ວ.

ພຣະບິດາເຈົ້າຂາ ຂ້າພຣະອົງຂໍໃຫ້ອະໄພ ຂ້າພຣະອົງຂໍວາງຄວາມຂົມຂື່ນ
ຄວາມຄຸນເຄືອງ ຄວາມກຽດຊັງ ແລະການກະບົດ ຂ້າພຣະອົງຂອບພຣະຄຸນ
ພຣະເຈົ້າທີ່ຂ້າພຣະອົງ ໄດ້ຮັບການຍອມຮັບແລ້ວໃນພຣະຄຣິດ
ຂ້າພຣະອົງເປັນລູກຂອງພຣະເຈົ້າ ສະຫວ່ນ ຄືບ້ານຂອງຂ້າພຣະອົງ
ຂ້າພຣະອົງເປັນສ່ວນໜຶ່ງຂອງຄອບຄົວທີ່ດີທີ່ສຸດໃນຈັກກະວານ

ຂ້າພຣະອົງເປັນເຊື້ອສາຍໃນພຣະຣາຊາວົງຂອງພຣະອົງ

ຂ້າແດ່ພຣະເຢຊູຄຣິດ ຂ້າພຣະອົງເຊື່ອວ່າພຣະອົງຊົງເປັນພຣະບຸດຂອງພຣະເຈົ້າ
ແລະ ເປັນຫົນທາງດຽວ ທີ່ຈະໄປເຖິງພຣະເຈົ້າ
ພຣະອົງຊົງສິ້ນພຣະຊົນເທິງໄມ້ກາງແຂນ ເພື່ອບາບຂອງຂ້າພຣະອົງ ແລະ
ພຣະອົງຊົງເປັນຂຶ້ນມາຈາກຄວາມຕາຍອີກຄັ້ງ ຂ້າພຣະອົງ
ຂໍກັບໃຈຈາກບາບທັ້ງສິ້ນຂອງຂ້າພຣະອົງ ແລະ ຂ້າພຣະອົງຂໍໃຫ້ອະໄພທຸກຄົນ
ເໝືອນທີ່ຂ້າພຣະອົງຢາກໃຫ້ພຣະອົງຊົງໃຫ້ອະໄພຂ້າພຣະອົງ ທຸກຄົນທີ່ປະຕິເສດ
ແລະ ເຮັດໃຫ້ຂ້າພຣະອົງເຈັບປວດ ແລະບໍ່ໄດ້ສະແດງຄວາມຮັກຕໍ່ຂ້າພຣະອົງ
ພຣະອົງເຈົ້າຂາ ບັດນີ້ຂ້າພຣະອົງຂໍອະໄພໃຫ້ພວກເຂົາທັ້ງໝົດ

ຂ້າພຣະອົງວາງໃຈໃນພຣະອົງສຳລັບການໃຫ້ອະໄພຂອງພຣະອົງ ແລະ
ຂ້າພຣະອົງເຊື່ອວ່າ ອົງພຣະຜູ້ເປັນເຈົ້າ ໄດ້ຊົງຍອມຮັບຂ້າພຣະອົງແລ້ວໃນເວລານີ້
ເພາະຂ້າພຣະອົງຢູ່ໃນພຣະຄຣິດ ຂ້າພຣະອົງໄດ້ຮັບການຍອມຮັບ
ຂ້າພຣະອົງໄດ້ຮັບຄວາມໂປດປານຢ່າງສູງ ຂ້າພຣະອົງ
ເປັນຈຸດມຸ້ງໝາຍຂອງການດູແລອັນພິເສດຂອງພຣະອົງ
ພຣະອົງຊົງຮັກຂ້າພຣະອົງຈິງໆ ພຣະອົງຊົງຕ້ອງການຂ້າພຣະອົງ
ພຣະອົງຄືພຣະບິດາຂອງຂ້າພຣະອົງ ພຣະອົງເຈົ້າຂາ
ຂ້າພຣະອົງຢາກຂອບພຣະຄຸນພຣະອົງ.

ແລະຂ້າພຣະອົງຢາກຈະທູນກັບພຣະອົງດ້ວຍວ່າ
ຂ້າພຣະອົງຍອມຮັບຕົວຂອງຂ້າພຣະອົງ ເອງໃນພຣະຄຣິດ
ໃນແບບທີ່ພຣະອົງຊົງສ້າງຂ້າພຣະອົງມາ ຂ້າພຣະອົງເປັນຝີພຣະຫັດ ຂອງພຣະອົງ
ຂ້າພຣະອົງຂອບພຣະຄຸນພຣະອົງສຳລັບສິ່ງທີ່ພຣະອົງຊົງກະທຳ ແລະຂ້າພຣະອົງ
ເຊື່ອວ່າພຣະອົງຊົງ ເລີ່ມຕົ້ນການດີແລ້ວ
ແລະຈະຊົງທຳຕໍ່ໄປຈົນເຖິງວັນແຫ່ງພຣະຄຶດ, ອົງພຣະຜູ້ເປັນເຈົ້າ
ບັດນີ້ຂ້າພຣະອົງຂໍປົດປ່ອຍຕົວຂ້າພຣະອົງເອງຈາກຄວາມກົດດັນ ອັນມືດມົນ
ແລະຊົ່ວຮ້າຍ, ຂ້າພຣະອົງຂໍປົດປ່ອຍຈິດວິນຍານຂອງຂ້າພຣະອົງ
ໃຫ້ຊື່ນຊົມຍິນດີໃນພຣະອົງໃນພຣະນາມພຣະເຢຊູຄຣິດເຈົ້າອາແມນ.

ຈົດໝາຍຄຳສອນ

ຂໍ້ຄວາມ ຖອດສຽງ: TL-L085-100-LAO
ບັນທຶກຫຼ້າສຸດ: 30 Oct 2024
ເວັບໄຊທ์: derekprince.com/lao



ປຶ້ມຄຳສອນ

ໃຫ້ຄວາມຈະແຈ້ງ ແລະ ຂະຫຍາຍຄວາມເຂົ້າໃຈ ຂອງທ່ານກ່ຽວກັບ ພຣະຄຳພີ ດ້ວຍ collection ປຶ້ມຄຳສອນ ຄຣິດສະຕຽນ ຂອງ ອາຈານ ດເຣັກ ປຶ້ຣນຊ



ການຜ້ຳດ່ຽວ ປະຈຳວັນ

ຄົ້ນຫາ ບົດຜ້ຳດ່ຽວປະຈຳວັນ ທີ່ສ້ຳງ ແຮງບັນດານໃຈຕາມຫຼັກການ ພຣະຄຳພີ ໂດຍຄຳ ສອນພາກປະຕິບັດ ຂອງ ອາຈານ ດເຣັກ ປຶ້ຣນຊ ເພື່ອຍົກລະດັບ ຄວາມເຊື່ອ ຄຣິດສະຕຽນ ຂອງທ່ານໃຫ້ຜິຣ.



ລາຍການວິທະຍຸ ທີ່ເປັນມ່ລະດົກ

ຮັບຟັງຖ້ອຍຄຳ ທີ່ສ້ຳງແຮງບັນດານໃຈ 10 ນາທີ ແລະ ເຊື່ອມຕໍ່ ຄວາມເຊື່ອ ເຂົ້ຳກັບຊີວິດ ຜ່ານ podcast ເຊິ່ງເປັນມ່ລະດົກ ຂອງອາຈານ ດເຣັກ ປຶ້ຣນຊ



ຄຳເທດສະໜາ

ຮັບຊົມ ຄຳເທດສະໜາ ເຊິ່ງເປັນຕົ້ນສະບັບ ທີ່ທ່ຳສ້ຳເນ້ຳຂຶ້ນໃໝ່ ໃນລະບົບ ດິຈິຕ້ອນ ໂດຍ ອາຈານ ດເຣັກ ປຶ້ຣນຊ ລວມທ້ຳຂໍ້ຄວາມ ຖອດສຽງ ສະບັບເຕັມ (ດາວໂຫຼດຜິຣ)



ແອັບທີ່ເປັນທ່ຳງ່ານ

ດາວໂຫຼດ ແອັບທີ່ເປັນທ່ຳງ່ານ ຂອງພັນທະກິດ ດເຣັກ ປຶ້ຣນ ໄດ້ຜິຣ ເພື່ອເສີມສ້ຳງຄວາມເຊື່ອຂອງ ທ່ານໄດ້ທຸກທີ່ ທຸກເວລ



ການປ່າວປະກາດ

ປ່າວປະກາດຊີວິດ ແລະ ພົບກັບປະສົບການ ໃນລິດອຳນ່ຳດຂອງຖ້ອຍຄຳ ພຣະເຈ້ຳ ທີ່ ສ່ຳມ່ຳດປ່ຽນແປງຊີວິດໄດ້ ໂດຍຄຳປ່າວປະກາດຂອງເຮ້ຳ ທີ່ຂຽນຕ່ຳມຫຼັກການຂອງ ພຣະຄຳພີ